ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະພັກ ທຫລ ເຂົ້າວາງກະຕ່າດອກໄມ້ຕໍ່ໜ້າ ຮູບປັ້ນຫຼໍ່ ປະທານ ໄກສອນ ພົມວິຫານ





ໃນໂອກາດທີ່ອົງຄະນະພັກທະນາຄານແຫ່ງ ສປປ ລາວ ຈະດຳເນີນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IV ຂອງຂັ້ນຕົນ ທີ່ຈະໄຂຂຶ້ນໃນມໍ່ໆນີ້, ໃນວັນທີ 11 ກັນຍາ 2020 ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ຊຶ່ງນໍາໂດຍສະຫາຍ ສອນໄຊ ສິດພະໄຊ ກໍາມະການສໍາຮອງສູນກາງພັກ, ເລຂາຄະນະພັກທະນາຄານແຫ່ງ ສປປ ລາວ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ຊຶ່ງໄດ້ຕາງໜ້າໃຫ້ແກ່ບັນດາສະຫາຍສະມາຊິກພັກ ແລະ ພະນັກງານໃນທົ່ວຂະແໜງການທະນາຄານ ໄດ້ເຂົ້າວາງພວງມະລາຢູ່ອະນຸສາວະລີນັກຮົບນິລະນາມ ເພື່ອເປັນການສະແດງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນ ແລະ ຈາລຶກເຖິງຄຸນງາມຄວາມດີ, ນໍ້າໃຈຕໍ່ສູ້ອັນພິລະອາດຫານ ແລະ ບໍ່ຍອມຈໍານົນຂອງບັນພະບູລຸດລາວ ກໍ່ຄືບັນດານັກຮົບປະຕິວັດທີ່ຍອມເສຍສະຫຼະຊີວິດ, ເລືອດເນື້ອເພື່ອພາລະກິດປະຕິວັດ ແລະ ປົດປ່ອຍຊາດພາຍໃຕ້ການຊີ້ນໍາ-ນໍາພາ ອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ ແລະ ການຕໍ່ສູ້ຢ່າງອົງອາດກ້າຫານຂອງປະຊາຊົນບັນດາເຜົ່າ.

ຈາກນັ້ນ, ສະຫາຍ ເລຂາຄະນະພັກທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ກໍ່ໄດ້ນໍາເອົາກະຕ່າດອກໄມ້ທີ່ສວຍສົດງົດງາມ ມາຈັດພິທີສະດຸດີຕໍ່ໜ້າຮູບປັ້ນຫຼໍ່ ເພື່ອສະແດງຄວາມເຄົາລົບຮັກ, ກະຕັນຍູຮູ້ບຸນຄຸນ ແລະ ລະນຶກເຖິງປະທານໄກສອນ ພົມວິຫານ ຜູ້ນໍາທີ່ດີເດັ່ນ ແລະ ເຄົາລົບຮັກຂອງພັກ-ລັດ ແລະ ປວງຊົນລາວທັງຊາດຊຶ່ງໃນຕະຫຼອດພາລະກິດປະຕິວັດຂອງເພິ່ນແມ່ນໄດ້ອຸທິດສະຕິປັນຍາ ກໍາລັງວັງຊາໃຫ້ແກ່ການຕໍ່ສູ້ປົດປ່ອຍຊາດ ກໍ່ຄືປົກປັກຮັກສາ ແລະ ສ້າງສາປະເທດຊາດ, ນໍາພາການປະຕິວັດຂອງປະຊາຊົນເຮົາກ້າວຂຶ້ນຈາກໄຊຊະນະນີ້ ສູ່ໄຊຊະນະໃໝ່ ທີ່ຍິ່ງໃຫຍ່ກວ່າເກົ່າເຮັດໃຫ້ປະເທດເຮົາຈາກບ່ອນເປັນເມືອງຂຶ້ນຂອງຈັກກະພັດຕ່າງດ້າວ ກາຍເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ, ມີຖານະອັນສົມກຽດໃນເວທີສາກົນ; ປະທານໄກສອນພົມວິຫານ ສົມແລ້ວທີ່ເປັນລູກຜູ້ປະເສີດຂອງປະຊາຊົນລາວບັນດາເຜົ່າ, ເປັນວິລະບຸລຸດທີ່ປີຊາສາມາດ, ສະຫຼາດສ່ອງໃສ ເວລາໃດກໍ່ຕັ້ງຕໍ່ບໍລິສຸດຕໍ່ພັກ,ຕໍ່ການປະຕິວັດ,ຖືເອົາຜົນປະໂຫຍດອັນຊອບທໍາຂອງຊາດ ແລະ ປະຊາຊົນເປັນສິ່ງສູງສຸດ, ເຊີດຊູຄວາມເປັນແບບຢ່າງນໍາໜ້າອັນໃສແຈ້ງ ແລະ ດີເລີດຂອງທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ; ປະທານ ໄກສອນ ພົມວິຫານ ມີແບບແຜນໃນການດໍາລົງຊີວິດທີ່ລຽບງ່າຍ,ປະຢັດ,ດຸໝັ້ນຂະຫຍັນພຽນ ແລະ ຊອກຮູ້ຮໍ່າຮຽນຢ່າງບໍ່ຢຸດຢັ້ງ.

 

ສະນັ້ນ; ຊື່ສຽງຣຽງນາມ, ຄຸນງາມຄວາມດີ, ວິລະກຳອັນລ້ຳຄ່າຂອງ ປະທານ ໄກສອນ ພົມວິຫານ ໄດ້ກາຍເປັນສັນຍາລັກ ແລະ ໃຈກາງແຫ່ງຄວາມສາມັກຄີ ເປັນເອກະພາບພາຍໃນທົ່ວພັກ-ລັດ, ທົ່ວປວງຊົນລາວບັນດາເຜົ່າ ແລະ ບັນດາປະຊາຊາດທີ່ຮັກຫອມສັນຕິພາບໃນທົ່ວໂລກ." ຊີວິດ ແລະ ພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ ຍັງຍືນຍົງຢູ່ໃນດວງໃຈຂອງປວງຊົນລາວຕະຫຼອດໄປ".

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ